ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ.

************************

ເຈົ້າແຂວງສາລະວັນ.

ເລກທີ 04 /ຈຂ.ສວ

ລົງວັນທີ 27 OCT 2015

# ຄຳສັ່ງ

ເຖິງ: ບັນດາເມືອງ, ພະແນກການ, ກົມກອງ-ອົງການທຽບເທົ່າ ແລະ ລັດວິສາຫະກິດພາຍໃນແຂວງ ສາລະວັນ.

ເລື່ອງ: ຫ້າມປູກຕົ້ນໄມ້ ແລະ ປຸກສ້າງສິ່ງຕ່າງໆຢູ່ກ້ອງແລວສາຍສົ່ງໄຟຟ້າແຮງສູງ, ສາຍຈຳໜ່າຍໄຟຟ້າ ແລະ ສະກັດກັ້ນກຸ່ມຄົນທີ່ບໍ່ດີທີ່ລັກລອບເອົາອຸປະກອນສາຍສົ່ງໄຟຟ້າແຮງສູງ, ສາຍຈຳໜ່າຍໄຟຟ້າ ໃນຂົງເຂດແຂວງ ສາລະວັນ.

- ອີງຕາມ: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21/10/2003.
- ອີງຕາມ: ກົດໝາຍວ່າດວ້ຍໄຟຟ້າ ສະບັບເລກທີ 03/ສພຊ, ລົງວັນທີ 20/12/2011.
- ອີງຕາມ: ໃບສະເໜີຂອງພະແນກພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 32/ພບ.ສວ, ລົງວັນທີ 23/10/2015.
- ອີງຕາມ: ໜັງສືສະເໜີຂອງ ລັດວິສາຫະກິດໄຟຟ້າ ຝ່າຍຄຸ້ມຄອງລະບົບສາຍສົ່ງ ແລະ ສະຖານີ, ຫ້ອງການຄຸ້ມຄອງລະບົບສົ່ງໄຟຟ້າພາກໃຕ້ ສະບັບເລກທີ 960/ຟຟລ,ຄບສ,ພຕ, ປາກເຊ, ລົງວັນທີ 19/10/2015.

ຜ່ານມາໄດ້ມີກຸ່ມຄົນບໍ່ດີຈຳນວນໜຶ່ງ ໄດ້ລັກເອົາຊິ້ນສ່ວນເສົາເຫຼັກສານໄຟຟ້າແຮງສູງ, ສາຍຈຳໜ່າຍໄຟຟ້າ ເຊິ່ງເປັນຊັບສິນຂອງຊາດ, ຖືກເສຍຫາຍເປັນຈຳນວນຫຼວງຫຼາຍ, ເຮັດໃຫ້ເສຍງົບປະມານໃນການສ້ອມແປງບຳລຸງຮັກສາເປັນຈຳນວນບໍ່ໜ້ອຍ ແລະ ບາງຂົງເຂດຍັງມີການປູກຕົ້ນໄມ້ອຸດສາຫະກຳທີ່ໃຫ່ຍ ແລະ ປຸກສ້າງສິ່ງຕ່າງໆຢູ່ກ້ອງແລວສາຍສົ່ງໄຟຟ້າແຮງສູງ, ສາຍຈຳໜ່າຍໄຟຟ້າ, ເຊິ່ງກໍ່ໃຫ້ເກີດໄຟຕົກ, ໄຟມອດ ແລະ ຂັດກັບເຕັກນິກໄຟຟ້າຂອງ ສປປ ລາວ, ເພື່ອສະກັດກັ້ນກຸ່ມຄົນທີ່ບໍ່ດີ ແລະ ບັນຫາຕ່າງໆທີ່ຈະເກີດຂຶ້ນໃຫ້ທັນການ.

## ເຈົ້າແຂວງສາລະວັນ ອອກຄຳສັ່ງ ດັ່ງນີ້:

1. ໃຫ້ເຈົ້າເມືອງ, ພະແນກການ, ກົມກອງ, ກຸ່ມບ້ານ ແລະ ບ້ານ ປະສານສົມທົບຮ່ວມມືກັນ ໃນການຕິດຕາມບຸກຄົນກຸ່ມຄົນທີ່ບໍ່ດີລັກເອົາອຸປະກອນເຫຼັກເສົາສານສາຍສົ່ງໄຟຟ້າແຮງສູງ, ສາຍຈຳໜ່າຍໄຟຟ້າຕາມຈຸດຕ່າງໆ ໃນທົ່ວແຂວງສາລະວັນ ແລະ ບັນດາຮ້ານເກັບຊື້ເຫຼັກເສດຕະຫຼອດຮອດບຸກຄົນທີ່ມີອຸປະກອນໄຟຟ້າມາຄອບຄອງ, ຖ້າຫາກພົບເຫັນໃຫ້ລາຍງານເຈົ້າໜ້າທີ່ ຫຼື ອຳນາດການປົກຄອງບ້ານ ສົມທົບກັບເຈົ້າໜ້າທີ່ໄຟຟ້າໃນແຕ່ລະຂົງເຂດ ເພື່ອກວດກາ, ກັກຕົວຜູ້ກ່ຽວມາດຳເນີນຄະດີຕາມລະບຽບກົດໝາຍ.
2. ໃຫ້ທ່ານເຈົ້າເມືອງ 08 ຕົວເມືອງ, ພະແນກການ, ອອກຄຳສັ່ງ ແຈ້ງການໃຫ້ແຕ່ລະບ້ານ ແລະ ກົມກອງ, ບໍລິສັດ, ໂຮງຈັກໂຮງງານ, ຫ້ອງການທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໄດ້ຮັບຊາບ.

2.1. ໃຫ້ແຕ່ງຕັ້ງຄະນະກຳການຄຸ້ມຄອງຂັ້ນເມືອງ, ກຸ່ມບ້ານ ແລະ ບ້ານທີ່ມີສາຍສົ່ງແຮງສູງ, ສາຍຈຳໜ່າຍໄຟຟ້າຜ່ານ, ໂດຍປະກອບມີພາກສ່ວນທີ່ກ່ຽວຂ້ອງ ແລະ ໃຫ້ບ້ານເປັນເຈົ້າການໃນການຕິດຕາມກວດກາເປົ້າໝາຍກຸ່ມຄົນທີ່ບໍ່ດີຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ເພື່ອລາຍງານໃຫ້ຫ້ອງການຄຸ້ມຄອງລະບົບສາຍສົ່ງໄຟຟ້າພາກໃຕ້, ສະຖານີໄຟຟ້າ, ພະແນກຄຸ້ມຄອງລະບົບສາຍສົ່ງປະຈຳແຂວງ ຫຼື ເຈົ້າໜ້າທີ່ໄຟຟ້າໃນຂົງເຂດພະລັງງານ ແລະ ບໍ່ແຮ່ ຮັບຊາບ.

2.2. ໃຫ້ບ້ານ, ກຸ່ມບ້ານ ແຈ້ງໃຫ້ປະຊາຊົນຊາບ, ບໍ່ອະນຸຍາດໃຫ້ປຸກສ້າງເຮືອນ, ຮ້ານ ແລະ ປູກຕົ້ນໄມ້ທີ່ມີຄວາມສູງເກີນກວ່າ 3 ແມັດ ໃສ່ກ້ອງ ຫຼື ເຂດສະຫງວນຄວາມປອດໄພຈາກຈຸດໃຈກາງຂອງໄຟອອກໄປເບື້ອງ 25 ແມັດ ຕາມແລວສາຍສົ່ງແຮງສູງ ເປັນຕົ້ນແມ່ນ: ຕົ້ນຢາງພາລາ, ໄມ້ເກດສະໜາ, ໄມ້ສັກ ແລະ ໄມ້ອື່ນໆທີ່ຂັດຕໍ່ມາດຖານເຕັກນິກໄຟຟ້າຂອງ ສປປ ລາວ, ສຳລັບຕາມແລວສາຍສົ່ງໄຟຟ້າທີ່ພວມດຳເນີນການກໍ່ສ້າງໃນປະຈຸບັນແມ່ນຫ້າມປຸກສ້າງ ແລະ ປູກພືດທຸກສະນິດຈົນກວ່າມີຄຳສັ່ງແນະນຳ ຈຶ່ງສາມາດປູກພືດລົ້ມລຸກໄດ້ ຖ້າບຸກຄົນໃດລະເມີດແມ່ນຈະບໍ່ມີການຊົດເຊີຍແຕ່ຢ່າງໃດ.

- ໃຫ້ພະແນກຄຸ້ມຄອງລະບົບສາຍສົ່ງປະຈຳແຂວງ, ສະຖານີ ຫຼື ເຈົ້າໜ້າທີ່ໄຟຟ້າໃນຂົງເຂດພະລັງງານ ແລະ ບໍ່ແຮ່ ສົມທົບກັບບ້ານ ລົງຕິດຕາມກວດກາສາຍສົ່ງໄຟຟ້າແຮງສູງ ຖ້າຫາກມີສິ່ງປຸກສ້າງທີ່ຂັດຕໍ່ມາດຖານເຕັກນິກໄຟຟ້າຂອງ ສປປລາວ ແມ່ນສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງລະດົມຍົກຍ້າຍອອກຈາກແລວສາຍສົ່ງໄຟຟ້າແຮງສູງ ເພື່ອຄວາມປອດໄພທາງດ້ານຊີວິດ ແລະ ຊັບສິນພ້ອມທັງສະດວກໃນການຄຸ້ມຄອງບຳລຸງຮັກສາແລວສາຍສົ່ງໄຟຟ້າ.
- ຫ້າມບັນດາຮ້ານ ເກັບຊື້-ຂາຍເຫຼັກເສດ, ບໍລິສັດຕິດຕັ້ງໄຟຟ້າເອກະຊົນ, ໂຮງຈັກ, ໂຮງງານ, ຮັບຊື້ອຸປະກອນໄຟຟ້າຈາກກຸ່ມຄົນທີ່ບໍ່ດີລັກລອບເອົາໄປຂາຍຢ່າງເດັດຂາດ, ຖ້າຫາກເຈົ້າໜ້າທີ່ພົບເຫັນຈະຖືກປັບໃໝ ແລະ ກັກຕົວມາດຳເນີນຄະດີຕາມລະບຽບກົດໝາຍຢ່າງເຂັ້ມງວດ.

3. ໃຫ້ບັນດາເມືອງ, ພະແນກ, ກົມກອງ ແລະ ລັດວິສາຫະກິດ, ບໍລິສັດ, ໂຮງຈັກ, ໂຮງງານຫ້າງຮ້ານ, ພໍ່ແມ່ປະຊາຊົນ ໃນທົ່ວແຂວງສາລະວັນ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

4. ຄຳສັ່ງສະບັບນີ້ມີຜົນສັກສິດ ແລະ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງໆ ສາລະວັນ.

ສີສຸວັນ ວົງຈອມສີ
Sisouvanh VONGCHOMSY